## ບົດທີ 7

# ການໂຕ້ຖຽງກັນໃນພະວິຫານ

ໃນບົດຮຽນນີ້ເຮົາຈະຮຽນອີກກ່ຽວກັບການໂຕ້ຖຽງກັນລະຫວ່າງພະເຢຊູກັບຜູ້ນຳສາດສະໜາຢິວໃນພະວິຫານ. ເລື່ອງໃນມັດທາຍ 22:15-16 ສະແດງມາໃນຮູບຕໍ່ໄປນີ້.
ມີຄຳຖາມ 4 ປະການແລະຄຳຕອບ 4 ປະການ.




**1** ໃນບົດຮຽນກ່ອນເຮົາໄດ້ຮຽນ 3 ສ່ວນປະກອບຂອງບຸກຄົນຄື: ຈິດໃຈ ຄວາມຄິດ ແລະ ກຳລັງ.
ກ. ອາລົມຢູ່ໃນສ່ວນໃດ? ______________________________
ຂ. ການຮຽນຮູ້ເດ? ______________________________

**2** ພະເຈົ້າສ້າງມະນຸດເຮົາໃຫ້ມີຄວາມຄິດຢ່າງບໍລິບູນ ເມື່ອມະນຸດຕົກໃນບາບ
ດັ່ງນັ້ນຄວາມ______________ ກາຍເປັນຄິດໂກງ. (ຕື່ມຄວາມຂາດ)

**3** ໃນບົດນີ້ເຮົາຈະຮຽນເລື່ອງຄວາມຄິດທີ່ມອບໄວ້ກັບພະເຈົ້າແລ້ວ. ໃຫ້ອ່ານ 2 ກລທ 4:4 ກ່ອນ
ກ. ຕາມໃນຂໍ້ນັ້ນແມ່ນໃຜເປັນພະຂອງສະໄໝນີ້? ______________________

ຂ. ບໍ່ໃຫ້ໄດ້ເຫັນຫຍັງ? ______________________________

ຄ. ເປັນຫຍັງຄົນທີ່ບໍ່ເຊື່ອໃນພະເຢຊູ ເຂົ້າໃຈເລື່ອງຂ່າວປະເສີດຍາກ? __________

**4** ໃຫ້ທ່ານໝາຍ 2 ໂກລິນໂທ 4:4 ໄວ້ແລ້ວເປີດອ່ານເອເຟໂຊ 4:17-18 ດ້ວຍ. ຄົນທີ່ບໍ່ໄດ້ບັງເກີດໃໝ່ໃນ ພະເຢຊູຢູ່ໃນສະພາບໃດ? (ເລືອກ 3 ຂໍ້)

ກ. ສົມບູນ. ຂ. ຫາປະໂຫຍດບໍ່ໄດ້ ຄ. ຄິດຢ່າງມີເຫດຜົນ

ງ. ຄວາມຄິດມືດມົນໄປ ຈ. ບໍ່ຮູ້ເທົ່າເຖິງການທີ່ມີຢູ່ໃນຕົວເຂົາ

**5** 2 ໂກລິນໂທ 4:4 ບັນລະຍາຍຜູ້ທີ່ບໍ່ເຂົ້າໃນພະເຢຊູເປັນຢ່າງໃດ? (ເລືອກ)

ກ. ບັງຕາໄວ້. ຂ. ເຫັນແສງສະຫວ່າງ. ຄ. ເຂົ້າໃຈແຈ້ງດີ.

**6** ໃຫ້ອ່ານ 2 ໂກລິນໂທ 3:14-16 ເວົ້າເລື່ອງຊາດຢິວທີ່ບໍ່ເຂົ້າໃຈພະທຳຂອງເຂົາເອງ. ໃນຂໍ້ 16 ເຂົາເຮັດຫຍັງແລ້ວຜ້າປົກນັ້ນຈຶ່ງຍົກອອກເສຍ? ____________________

**7** ໃຫ້ທ່ານຂຽນຄຳ "ພະເຢຊູ" ຫຼື "ພະຍາມານ" ໃສ່ໃນບ່ອນຫວ່າງຕໍ່ໄປນີ້.

ກ. __________ ເປັນພໍ່ຂອງການຕົວະ.

ຂ. __________ ເປັນແຕ່ຄວາມຈິງ.

ຄ. __________ ເຕັມໄປດ້ວຍຄວາມສະຫວ່າງ.

ງ. __________ ເຕັມໄປດ້ວຍຄວາມມືດ.

ຈ. __________ ເປັນແຫຼ່ງກຳເນີດຂອງຫຼັກຄວາມເຊື່ອບໍ່ຈິງທຸກປະການ.

ສ. __________ ເປັນແຫຼ່ງກຳເນີດຂອງທຸກສິ່ງທີ່ຕໍ່ຕ້ານພະເຈົ້າ.

**8** ຕາມທີ່ເຮົາຮຽນມາແລ້ວ ມີວິທີທາງສອງຢ່າງທີ່ພະຍາມານຫຼອກລວງມະນຸດເລື່ອງພະເຈົ້າ. ມານເອົາພະຄຳຂອງພະ ເຈົ້າມາຕື່ມໃສ່ກໍມີແລະຫັກອອກກໍມີດ້ວຍ. ພວກຟາລິຊາຍແລະພວກຊາດູກາຍ ພະຍາຍາມເຮັດໃຫ້ພະເຢຊູຫຼົງຜິດຢູ່ສະເໝີ ແລະ ເຂົາມັກຫຼອກລວງຄົນທີ່ຊອກຫາຄວາມຈິງ.



ກ. ໃນສອງພວກນັ້ນ ແມ່ນພວກໃດທີ່ມັກເພີ່ມຕື່ມໃສ່ຂໍ້ພະທຳ?

______________________________

ຂ. ພວກໃດທີ່ມັກຫັກອອກຈາກພະທຳຂອງພະທຳ? ______

ຄ. ແມ່ນໃຜທີ່ຫຼອກລວງເຂົາທັງສອງ? __________

**9** ສອງພວກນັ້ນເປັນເຄື່ອງມືຂອງພະຍາມານໃນການຫຼອກລວງມະນຸດເຮົາ

ກ. ພວກຟາລິຊາຍບິດເບືອນພະທຳຢ່າງໃດ? ____________________

ຂ. ພວກຊາດູກາຍເດ? ______________________________

ຄ. ພະຍາມານມັກໃຊ້ວິທີທາງສອງຢ່າງໃດເພື່ອບັງຄວາມຈິງຂອງພະເຈົ້າໄວ້? ______

______________________________

**10** ໃນບົດຮຽນກ່ອນເຮົາຮຽນຮູ້ແລ້ວວ່າ ພະເຢຊູຊະນະຜູ້ທີ່ໂຕ້ຖຽງກັບພະອົງ.

ກ. ການໂຕ້ຖຽງກັນນັ້ນເກີດຂຶ້ນໃນບ່ອນໃດ? ______________________________

ຂ. ໃນວັນໃດ? ______________________________________________

ຄ. ໃນການໂຕ້ຖຽງກັນນັ້ນ ພະເຢຊູໃຊ້ສ່ວນໃດ? (ເລືອກ)

ຄວາມຄິດ ຈິດໃຈ ກຳລັງ

**11** ການໂຕ້ຖຽງກັນນັ້ນ ເຮົາຈະແຍກເປັນສອງສ່ວນ. ຫຼັງຈາກທີ່ປະໂລຫິດມາຖາມສິດອຳນາດຂອງພະອົງ, ພະອົງຕອບດັ່ງ ຕໍ່ໄປນີ້:

ກ. ພະເຢຊູຍົກຄຳອຸປະມາ 3 ປະການທີ່ເຮົາຮຽນມາໃນບົດທີ 5 ຂອງຫຼັກສູດນີ້. ໃຫ້ທ່ານກັບໄປອ່ານຈາກ ມັດທາຍ 21:28 ຕໍ່ໄປພະອົງກ່າວຄຳອຸປະມາ 3 ປະການໃດ?

______________________________________________

______________________________________________

______________________________________________

ຂ. ສ່ວນທີສອງຄື ບັນຫາ ແລະ ຄຳຕອບ 4 ປະການທີ່ເຫັນໃນ ມັດທາຍ 22:15-46. ບັນຫາທັງ 4 ປະການທີ່ຈົດໄວ້ ຂ້າງລຸ່ມນີ້ບໍ່ຖືກກັບລຳດັບ. ໃຫ້ທ່ານຂຽນເລກ 1, 2, 3, 4 ໃສ່ແຕ່ລະຂໍ້ໃຫ້ຖືກຕາມລຳດັບ.

ເລື່ອງບຸດດາວິດ

ເລື່ອງພະບັນຍັດຂໍ້ໃຫຍ່

ເລື່ອງການຄືນມາຈາກຕາຍ

ເລື່ອງການເສຍຊ່ວຍ



**12** ໃຫ້ທ່ານຂຽນຫົວຂໍ້ບັນຫາ 4 ປະການທີ່ຜູ້ນຳສາດສະໜາຍົວຍົກມາຖາມພະເຢຊູຕາມລຳດັບ.

ກ. ______________________________________________

ຂ. ______________________________________________

ຄ. ______________________________________________

ງ. ______________________________________________

## ບັນຫາທີ 1

**13** ໃຫ້ອ່ານມັດທາຍ 22:15-22

ກ. ໃນຂໍ້ທີ 15 ແມ່ນພວກໃດມັກຈັບຜິດພະອົງ? ______________________

ຂ. ໃນຂໍ້ 16 ເຂົາໃຊ້ສິດຂອງເຂົາເອງ ແລະສິດຂອງອີກພວກໃດມາຖາມພະອົງ? ________

ຄ. ໃນຂໍ້ 17 ເຂົາຖາມຫຍັງ? ______________________________

ງ. ພະອົງຮູ້ວ່າເຈຕະນາຂອງເຂົາເປັນຢ່າງໃດ? (ຂໍ້ 18) ____________________

**14** ພວກເຂົາຖາມເພື່ອຈະຈັບຜິດພະອົງ ແຕ່ພະອົງຕອບຢ່າງມີປັນຍາແທ້.

ກ. ພະອົງຕອບຫຍັງ? ______________________________________________

______________________________________________________________

ຂ. ໄດ້ຍິນແລ້ວພວກເຂົາເຮັດຫຍັງ? (ຂໍ້ 22) ______________________________

**15** ພວກຟາລີຊາຍແລະພວກເຮໂລດຄິດວ່າເຂົາຖາມຢ່າງນັ້ນແລ້ວຈະຈັບຜິດພະອົງໄດ້. ຖ້າພະເຢຊູຕອບວ່າຈົ່ງເສຍໃຫ້ ແກ່ກາຍຊາ ພວກຄົນຢິວຈະເສຍໃຈເພາະເຂົາຊັງຈັກກະພັດໂລມ. ຖ້າພະອົງຕອບວ່າບໍ່ສົມຄວນຈະເສຍ,ພວກເຈົ້າໜ້າທີ່ ໂລມອາດຈະກ່າວຫາວ່າເປັນນັກກະບົດ.

ກ. ພະອົງຕອບເຂົາຢ່າງໃດ? ________________________________________

______________________________________________________________

ຂ. ຕອບຢ່າງນັ້ນແລ້ວ ຊາດຢິວຈະຜິດໃຈບໍ່? ______________________________

ຄ. ຄົນໂລມຈະຜິດໃຈບໍ່? ______________________________________________

**16** ຖ້າເຮົາຈະຍົກຄວາມຂອງພະເຢຊູໃນ ມັດທາຍ 22:21 ມາໃຊ້ໃນທຸກວັນນີ້ ເຮົາອາດຈະຕີຄວາມໝາຍວ່າຢ່າງໃດ? (ເລືອກ)

ກ. ຄຣິດສະຕຽນບໍ່ຕ້ອງເສຍພາສີໃຫ້ລັດ.

ຂ. ຄຣິດສະຕຽນໃນທຸກວັນນີ້ຕ້ອງຢູ່ໃຕ້ການບັງຄັບກົດໝາຍທຸກປະການເຖິງວ່າອາດຈະຜິດພະທຳຂອງພະເຈົ້າກໍຕາມ.

ຄ. ຄຣິດສະຕຽນຕ້ອງຢູ່ໃຕ້ການບັງຄັບກົດໝາຍທຸກປະການ ນອກຈາກກົດໝາຍທີ່ຜິດຕໍ່ພະທຳຂອງພະເຈົ້າ.

**17** ກ. ບັນຫາທຳອິດທີ່ເຂົາຍົກສະເໜີຕໍ່ພະເຢຊູຄືບັນຫາເລື່ອງຫຍັງ? __________________

ຂ. ແມ່ນສອງພວກໃດຢາກຈັບຜິດພະອົງ? ____________________________________

ຄ. ເຂົາຖາມດ້ວຍມີເຈຕະນາຢ່າງໃດ? ______________________________________

| |
|---|
| ຝຶກ: ໃນຕາຕະລາງໜ້າ 50 ໃຫ້ທ່ານຕື່ມຄວາມທີ່ຂາດໃສ່ "ບັນຫາທຳອິດ"<br>ແລ້ວຂຽນຄຳ "ເສຍພາສີໃຫ້ກາຍຊາ" ໃນພະຄຳພີກ່ອນມັດທາຍ 22:15 |

## ບັນຫາທີ 2

**18** ໃຫ້ອ່ານມັດທາຍ 22:23-33

ກ. ແມ່ນພວກໃດຖາມພະອົງເລື່ອງນີ້? ______________________________________

ຂ. ຖາມເລື່ອງຫຍັງ? (ເບິ່ງຂໍ້ 28:30) ______________________________________

**19** ໃຫ້ອ່ານ ກິດຈະການ 23:8 ດ້ວຍ. ເຮົາຮູ້ຢູ່ແລ້ວວ່າ ພວກຊາດູກາຍບໍ່ເຊື່ອພະຄຳພີທັງໝົດ.

ກ. ພວກຊາດູກາຍເຊື່ອຫຍັງກ່ຽວກັບການຄືນມາຈາກຕາຍ? ________________________

ຂ. ເຂົາຖາມພະເຢຊູເລື່ອງຫຍັງ? __________________________________________

ຄ. ເຂົາເອງເຊື່ອຢ່າງໃດກ່ຽວກັບເລື່ອງນີ້? ________________________________

ງ. ເປັນຫຍັງເຂົາຈິ່ງຖາມພະອົງໃນເລື່ອງນີ້? ________________________________

**20** ໃນຂໍ້ 29 ພະອົງຕອບເຂົາວ່າເຂົາຫຼົງຜິດເພາະເຂົາບໍ່ຮູ້ຈັກ ___________ ຫຼື _________ ຂອງພະເຈົ້າ. (ຕື່ມຄວາມຂາດ)

**21** ໃນທຸກວັນນີ້ມີຫຼາຍຄົນທີ່ບໍ່ຮູ້ພະຄຳພີແລະບໍ່ຮູ້ລິດເດດຂອງພະເຈົ້າ.

ກ. ແມ່ນໃຜເຮັດໃຫ້ຄວາມຄິດຂອງເຮົາມືດມົວໄປຈິ່ງຈະບໍ່ເຂົ້າໃຈພະຄຳພີ? ___________

ຂ. ແມ່ນໃຜສ່ອງແສງສະຫວ່າງໃນຄວາມມືດເຮົາຈິ່ງເຂົ້າໃຈພະທຳຂອງພະເຈົ້າໄດ້? _____

**22** ພວກຊາດູກາຍບໍ່ເຊື່ອໃນວິນຍານ ເຂົາເຊື່ອແຕ່ສິ່ງທີ່ເຫັນກັບຕາຢ່າງດຽວ.

ກ. ໃນມັດທາຍ 22:32 ພະເຢຊູສອນເລື່ອງທີ່ສຳຄັນຫຼາຍຢ່າງຄື ບໍ່ເປັນພະເຈົ້າຂອງຄົນ _____________ ແຕ່ເປັນພະ ເຈົ້າຂອງຄົນ ________________ . (ຕື່ມຄວາມຂາດ)

ຂ. ເມື່ອຄົນທັງປວງໄດ້ຍິນດັ່ງນັ້ນ ເຂົາຄິດຢ່າງໃດ? ___________________________

| |
|---|
| ຝຶກ: ໃຫ້ທ່ານເປີດຕາຕະລາງໜ້າ 50 ອີກ ແລ້ວຕື່ມຄວາມທີ່ຂາດໃສ່ "ບັນທາທີ 2" ຢ່າງຖືກຕ້ອງ |

## ບັນທາທີ 3

**23** ເຮົາຮຽນເລື່ອງພະບັນຍັດຂໍ້ໃຫຍ່ນີ້ໃນບົດກ່ອນ ດັ່ງນັ້ນເຮົາຈະບໍ່ຮຽນຫຼາຍອີກພຽງແຕ່ໃຫ້ສັງເກດຈຸດຕ່າງໆ ດັ່ງຕໍ່ໄປນີ້:

ກ. ເລື່ອງນີ້ຢູ່ໃນບົດແລະຂໍ້ໃດ? ____________________________________

ຂ. ພະເຢຊູຫາກໍ່ຕອບພວກໃດໃນເລື່ອງການຄືນມາຈາກຕາຍ? ___________________

ຄ. ຜູ້ທີ່ຖາມເລື່ອງພະບັນຍັດຂໍ້ໃຫຍ່ເປັນໃຜ? ______________________________

ງ. ຂຶ້ນກັບພວກໃດ? ____________________________________________

ຈ. ພະອົງຕອບຫຍັງ? ___________________________________________

| |
|---|
| ຝຶກ: ໃຫ້ຕື່ມຄວາມທີ່ຂາດໃສ່ໃນບ່ອນຫວ່າງ "ບັນທາທີ 3" |

**24** ເປັນຫຍັງພວກຟາລີຊາຍແລະພວກຊາດູກາຍຈິ່ງມັກມາຖາມພະອົງ? (ເບິ່ງມັດທາຍ 22:15 ແລະ 35.) ________________________________________________

*ພວກຟາລີຊາຍແລະຊາດູກາຍ ຖາມພະອົງເພື່ອຈະຈັບຜິດພະອົງ. ໃນຄຳຖາມຕໍ່ໄປນີ້ ແມ່ນພະເຢຊູເປັນຜູ້ຖາມ. ພະ ອົງຖາມເພື່ອຈະໃຫ້ແສງສະຫວ່າງສ່ອງເຂົ້າຄວາມຄິດຂອງຄົນທີ່ມາຟັງ.*

## ບັນຫາທີ 4

**25** ໃຫ້ອ່ານ ມັດທາຍ 22:41-46

ບັນຫາກ່ອນໆ ນັ້ນຄືຄຳຖາມທີ່ພວກຜູ້ນຳໃນສາດສະໜາຢິວຍົກມາເພື່ອຈັບຜິດພະເຢຊູ. ຄຳຖາມຕໍ່ໄປນີ້ແມ່ນພະເຢ ຊູຖາມເຂົາ ພະເຢຊູຖາມບໍ່ແມ່ນເພື່ອຈັບຜິດເຂົາ ແຕ່ເພື່ອໃຫ້ເຂົາພົບຄວາມຈິງ ແລ້ວປ່ຽນທ່າທີໃໝ່.

ກ. ໃນ ມັດທາຍ 2:42 ພະເຢຊູຖາມຫຍັງ? ________________________________

________________________________________________________________

ຂ. ພວກຟາລິຊາຍຕອບວ່າຢ່າງໃດ? ____________________________________

**26** ພວກຄົນຢິວເຊື່ອຢ່າງບໍ່ຖືກວ່າ ຜູ້ທີ່ພະເຈົ້າເລືອກໄວ້ (ເອີ້ນວ່າ ບຸດດາວິດ) ຈະມາເປັນກະສັດມີໄຊເໜືອສັດຕູຂອງຊາດ ຢິວທັງໝົດ. ເຂົາເຊື່ອວ່າພະຄຼິດນັ້ນຈະເປັນຜູ້ນຳກອງທັບຂອງເຂົາຕໍ່ໂລກ, ພະເຢຊູຖາມເຂົາຢ່າງນັ້ນ ເພື່ອຈະກວດແກ້ຄວາມຄິດນັ້ນໃຫ້ຖືກ. ຜູ້ທີ່ມາຟັງຄຳຖາມຂອງພະເຢຊູເປັນຄົນຢ່າງໃດ? (ເລືອກ)

ກ. ຄົນທີ່ບໍ່ຮູ້ພະຄຳພີ. ຂ. ເຂົາຮູ້ພະຄຳພີແລ້ວ ແຕ່ມີສ່ວນທີ່ບໍ່ເຂົ້າໃຈ.

ຄ. ເປັນສາວົກຂອງພະອົງ.

**27** ທີ່ພວກຟາລິຊາຍຕອບວ່າ ພະເຢຊູເປັນບຸດຂອງດາວິດກໍຖືກຢູ່. ພະເຢຊູຖາມຫຍັງຕໍ່ໄປ? __

________________________________________________________________

**28** ສາເຫດທີ່ພະເຢຊູຖາມຢ່າງນັ້ນປາກົດມາໃນຂໍ້ 45 ຄື: *ຖ້າດາວິດເອີ້ນພະຄຼິດວ່າ "ພະຜູ້ເປັນເຈົ້າ" ແລ້ວພະຄຼິດຈະເປັນເຊື້ອສາຍຂອງດາວິດໄດ້ຢ່າງໃດ?* ພະເຢຊູສອນພວກຟາລິຊາຍແລະພວກຊາດູກາຍວ່າ ທີ່ຈະຖືວ່າພະເຢຊູເປັນບຸດຂອງດາວິດບໍ່ພໍເທື່ອ, ຄືເປັນພະຜູ້ ເປັນເຈົ້າຂອງດາວິດອີກດ້ວຍ. ໃນສະພາບເປັນມະນຸດ ພະເຢຊູເປັນ ____________ ຂອງດາວິດ ແຕ່ໃນສະພາບເປັນພະເຈົ້າພະເຢຊູເປັນ ______________ ຂອງດາວິດ. (ຕື່ມຄວາມຂາດ)

| ຝຶກ: ໃນຕາຕະລາງໜ້າ 50 ໃຫ້ຕື່ມຄວາມທີ່ຂາດໃສ່ "ບັນຫາທີ 4" ຢ່າງຖືກຕ້ອງ. |
|---|

**29** ຄວາມທີ່ພະເຢຊູຖາມພວກຜູ້ນຳໃນສາດສະໜາຢິວ ຕ່າງກັນກັບຄວາມທີ່ພວກຜູ້ນຳຖາມພະອົງ.

ກ. ພວກຟາລິຊາຍແລະຊາດູກາຍຖາມພະອົງເພື່ອຫຍັງ? ________________________

ຂ. ພະອົງຖາມພວກເຂົາເພື່ອໃຫ້ເຂົາຊອກຫາຫຍັງ? __________________________

**30** ໃນຂໍ້ 46 ພວກຜູ້ນຳໃນສາດສະໜາຢິວເປັນຢ່າງໃດ? __________________________

**31** ກ. ພວກຟາລິຊາຍແລະຊາດູກາຍຍົກບັນຫາມາຖາມພະອົງເພື່ອຫຍັງ? ______________

ຂ. ໃຫ້ທ່ານກັບໄປເບິ່ງຮູບໜ້າປົກບົດນີ້ກ່ອນ

1. ຮູບໃດສະແດງເຖິງບັນຫາເລື່ອງການຄືນມາຈາກຕາຍ? ____________________
2. ຮູບໃດສະແດງເຖິງພະບັນຍັດຂໍ້ໃຫຍ່? ________________________________
3. ຮູບໃດສະແດງເຖິງບັນຫາເລື່ອງບຸດດາວິດ? ___________________________
4. ຮູບໃດສະແດງເຖິງບັນຫາເລື່ອງການເສຍຊ່ວຍ? _________________________

**32** ເຫັນແລ້ວວ່າ ພະຍາມານອາດຈະຢາກຫຼອກລວງໃຫ້ເຮົາປ່ຽນຄວາມຄິດທີ່ຜິດໄດ້ດ້ວຍຄວາມຕົວະ. ໃນ 2 ໂກລິນໂທ 11:3 ອາຈານໂປໂລເຕືອນພວກຄຼິດສະຕຽນດັ່ງຕໍ່ໄປນີ້:

*"ແຕ່ເໝືອນດັ່ງງູນັ້ນໄດ້ຫຼອກລວງນາງເອວາດ້ວຍກົນອຸບາຍຂອງມັນເຮົາຄິດຢ້ານວ່າຈິດໃຈຂອງເຈົ້າທັງຫຼາຍກໍຈະຖືກຫຼອກລວງດ້ວຍຢ່າງໃດຢ່າງໜຶ່ງໃຫ້ຫຼົງຈາກຄວາມຈິງຮັກພັກດີອັນສັດຊື່ແລະອັນບໍລິສຸດຕໍ່ພະຄຼິດດັ່ງນັ້ນ."*

ໃນສາມສ່ວນຂອງບຸກຄົນເຮົານັ້ນ ພະຍາມານຢາກຊັກຊວນໃຫ້ເຮົາປ່ຽນໄປທາງຄິດໂກງໃນສ່ວນໃດ? ______________________________________________

**33** ເຮົາຮູ້ຢູ່ແລ້ວວ່າ ພະຍາມານຢາກຫຼອກລວງເຮົາເລື່ອງພະຄຳຂອງພະເຈົ້າໃນທາງສອງເສັ້ນ

ກ. ພະຍາມານຫຼອກລວງພວກຟາລີຊາຍເລື່ອງພະຄຳຂອງພະເຈົ້າຢ່າງໃດ? ___________

______________________________________________________________

ຂ. ພວກຊາດູກາຍເດ? _____________________________________________

ຄ. ພະຍາມານມັກມາຫຼອກລວງພວກເຮົາເລື່ອງພະຄຳຂອງພະເຈົ້າເຊັ່ນດຽວກັນດ້ວຍໃຫ້ເຮົາມີຄວາມສົງໄສເກີດມີມາ. ພະຍາມານມີຈຸດປະສົງຢ່າງໃດໃນການນັ້ນ? (ເລືອກ)

1. ໃຫ້ເຮົາຕົກໃນຄວາມເຊື່ອ.
2. ໃຫ້ເຮົາມີຄວາມເຊື່ອຫຼາຍຂຶ້ນມາ.
3. ໃຫ້ເຮົາເຫັນແກ່ບັນຫາຈິ່ງຈະມີຄວາມເຊື່ອໜ້ອຍລົງ.
4. ໃຫ້ເຮົາແກ້ບັນຫາຈິ່ງຈະແຂງແຮງຂຶ້ນ.

**34** ພະເຈົ້າສ້າງມະນຸດຢ່າງສົມບູນໃນທຸກດ້ານ, ແຕ່ເມື່ອມະນຸດຕົກໃນບາບແລ້ວ ລັກສະນະມະນຸດເກີດມີການຄິດໂກງ

ກ. ຄວາມບາບເຮັດໃຫ້ມະນຸດເສຍຫາຍເຖິງຂະໜາດໃດ? ____________________

ຂ. ໃນ 2 ໂກລິນໂທ 4:4 ແລະ ເອເຟໂຊ 4:17-18 ສະພາບຂອງຄົນທີ່ບໍ່ເຊື່ອໄວ້ວາງໃຈໃນພະເຢຊູ ເປັນຢ່າງໃດ? ____________________________________________

______________________________________________________________

**35** ໃນໂລມ 12:2 ອາຈານໂປໂລຂຽນດັ່ງຕໍ່ໄປນີ້:

*"ຢ່າດຳເນີນຊີວິດເໝືອນຢ່າງຊາວໂລກນີ້ ແຕ່ຈົ່ງຮັບການຊົງປ່ຽນແປງຈິດໃຈ..."*

ກ. ຄົນທີ່ບໍ່ເປັນຄຼິດສະຕຽນດຳເນີນຊີວິດເໝືອນຢ່າງຊາວໃດ? ____________________

ຂ. ຄຣິດສະຕຽນຈະຮັບການປ່ຽນແປງຫຍັງ? ______________________________

**36** ໃຫ້ອ່ານຄຳຂອງອາຈານໂປໂລໃນ ເອເຟໂຊ 4:23 ວິນຍານຈິດຂອງຄົນທີ່ໄວ້ວາງໃຈໃນພະເຢຊູຈະເປັນຢ່າງໃດ? ______________________________

**37** ກ. ພະເຈົ້າຈະໃຫ້ເຮົາຮັກພະອົງດ້ວຍ __________________ ຄວາມຄິດ. (ຕື່ມຄວາຂາດ)

ຂ. ພະເຈົ້າສ້າງມະນຸດຢ່າງ ______________________________ ໃນທຸກດ້ານ. (ຕື່ມ)

ຄ. ສ້າງໃຫ້ມີຮູບຮ່າງຄ້າຍຄືກັນກັບໃຜ? ______________________________

ງ. ເອເຟໂຊ 4:23 ແມ່ນສິ່ງໃດທີ່ຖືກຕັ້ງຂຶ້ນໃໝ່? ______________________________

**38** ພະເຈົ້າຈະໃຫ້ຄວາມຄິດຂອງເຮົາເປັນຢ່າງໃດ? ______________________________

**39** ໃນ 2 ກລທ 10:5 ເຮົາຈິ່ງໃຫ້ຄວາມຄິດທຸກປະການລົງຢູ່ໃຕ້ບັງຄັບຈົນເຖິງນ້ອມຟັງໃຜ? ___

**40** ໃນແຕ່ລະຂໍ້ຕໍ່ໄປນີ້ ໃຫ້ທ່ານຂຽນຄຳ "ຕັ້ງ" ຂ້າງປະໂຫຍກທີ່ຈະຊ່ວຍໃຫ້ເຮົາຕັ້ງຄວາມຄິດໃໝ່ແລະຄຳ "ບໍ່" ຂ້າງ ຄວາມທີ່ບໍ່ແມ່ນ.

_____ກ. ເວົ້າຄວາມຂີ້ເຮີ

_____ຂ. ອ່ານປຶ້ມເລື່ອງຊີວິດຄຣິດສະຕຽນ

_____ຄ. ສຶກສາຊີວະປະຫວັດຂອງພະເຢຊູ

_____ງ. ເບິ່ງແຕ່ຊີເນທຸກໆ ຢ່າງ

_____ຈ. ດູຖູກຊາດອື່ນ

**41** ການໃຫ້ວິນຍານຈິດຕັ້ງຂຶ້ນໃໝ່ ມີຢູ່ສອງສ່ວນ ຄືເຮົາຕ້ອງປະຕິເສດສ່ວນທີ່ບໍ່ບໍລິສຸດແລະບໍ່ສັດຊື່. ສິ່ງໃດທີ່ສັດຊື່ແລະບໍ ລິສຸດເຮົາຈິ່ງຍຶດໝັ້ນ, ພະຄຳພີ 3 ຂໍ້ຕໍ່ໄປນີ້ບອກເຖິງການຍຶດສິ່ງທີ່ດີຢ່າງໝັ້ນຄົງ. ໃຫ້ທ່ານອ່ານ 1 ເປໂຕ 1:13, ຟີລິບປອຍ 4:8 ແລະ ໂກໂລຊາຍ 3:2.

ກ. ໃນ 1 ເປໂຕ 1:13 ເຫັນຄຳ "ຈົ່ງ" ຈັກເທື່ອ? ______________________________

ຂ. ໃນ ຟີລິບປອຍ 4:8 ເຫັນຄຳ "ສິ່ງໃດ" ຈັກເທື່ອ? ______________________________

ຄ. ໃນ ໂກໂລຊາຍ 3:2 ຈົ່ງເອົາໃຈໃສ່ສິ່ງໃດ? ______________________________

**42** ທັງສາມຂໍ້ພະຄຳພີໃນຄຳຖາມ 41 ນັ້ນຄື ຄຳສັ່ງ. ພວກຄຣິດສະຕຽນເຮົາຈິ່ງຄິດຫາສິ່ງຂອງພະເຈົ້າ. ຖ້າບໍ່ດັ່ງນັ້ນພະ ຍາມານຈະມາສວຍໂອກາດຍຶດເອົາສິດໃນຄວາມຄິດຂອງເຮົາ. ໃນ ເຮັບເລີ 8:10 ພະເຈົ້າຈະບັນຈຸຫຍັງໄວ້ໃນໃຈຂອງຜູ້ທີ່ຕິດຕາມພະອົງ? __________________

**43** ຖ້າຈະຕັ້ງວິນຍານຈິດຂຶ້ນໃໝ່ ເຮົາຕ້ອງຮ່ວມກັບພະວິນຍານຂອງພະເຈົ້າ. ພະຍາມານຢາກໃຫ້ເຮົາຂີ້ຄ້ານບໍ່ຄິດຫາພະ ເຈົ້າດັ່ງນັ້ນມານຈະມາທົດລອງເຮົາໄດ້ງ່າຍ.

ກ. ທ່ານອາດຈະເຮັດຢ່າງໃດເພື່ອຊ່ວຍໃຫ້ຕັ້ງຄວາມຄິດໃໝ່ໃນວິນຍານຈິດ? (ໃຫ້ຂຽນໃນບ່ອນຫວ່າງຕໍ່ໄປນີ້) ______________________________

______________________________

ຂ. ທ່ານຈຶ່ງຕັດສິ່ງໃດທີ່ບໍ່ບໍລິສຸດອອກຈາກຄວາມຄິດຈຶ່ງຈະຕັ້ງຄວາມຄິດມາໃໝ່? ________

________________________________________________________________

________________________________________________________________

**44** ມີຫຼາຍຄົນທີ່ບໍ່ຮູ້ຫຼັກການຂອງພະເຈົ້າ. ໃນພະທຳໂລມ ແລະ ໂກລິນໂທ ອາຈານໂປໂລຖາມວ່າ "ພວກທ່ານບໍ່ຮູ້ບໍ່" ຫຼາຍເທື່ອບໍ່ແມ່ນພຽງແຕ່ຊາດໂລມກັບຊາວໂກລິນໂທທີ່ຂາດບໍ່ຮູ້, ພວກເຮົາກໍຂາດຄວາມຮູ້ຫຼາຍອີກດ້ວຍ. ໃນ ມັດທາຍ 22:29 ພະເຢຊູ ບອກພວກຊາດູກາຍວ່າ ເຂົາຫຼົງຜິດ ເພາະບໍ່ຮູ້ຈັກສິ່ງໃດ? ________________________________

**45** ຕີໂມທຽວ ເປັນຄົນທີ່ຮູ້ຈັກພະທຳຄຳພີຕັ້ງແຕ່ນ້ອຍມາ (2 ຕີໂມທຽວ 3:15) ແຕ່ອາຈານໂປໂລເຕືອນເພິ່ນໄວ້ດັ່ງຕໍ່ໄປ ນີ້:



*ຈົ່ງອິດສາພະຍາຍາມສະແດງຕົນເໝືອນເປັນຄົນທີ່ພິສູດແລ້ວຕໍ່ພະພັກພະເຈົ້າເປັນຄົນງານທີ່ບໍ່ຕ້ອງອາຍ ແລະໃຊ້ພະທຳແຫ່ງຄວາມຈິງຢ່າງຖືກຕ້ອງ (2 ຕມທ 2:15)*

ຖ້າທ່ານຈະໃຊ້ພະທຳແຫ່ງຄວາມຈິງຢ່າງຖືກຕ້ອງ ແມ່ນໃຜຈະຕ້ອງອິດສາ? ____________

**46** ໃຫ້ອ່ານ ໂຢຮັນ 8:31-32

ກ. ສາວົກແທ້ຂອງພະອົງຈະຕັ້ງໝັ້ນຄົງຢູ່ໃນສິ່ງໃດ? ________________________

ຂ. ຕ້ອງຮູ້ຫຍັງຈຶ່ງຈະເປັນອິດສະລະ? ________________________________

ຄ. ໃນ ໂຢຮັນ 14:6 ແມ່ນຜູ້ໃດເປັນຄວາມຈິງ? ____________________________

| |
|---|
| ກ່ອນຈະເຂົ້າປະຊຸມຂ້າງໜ້າໃຫ້ທ່ານຮັບພິຈາລະນາວ່າ<br>ເຮົາຈະບັງຄັບຄວາມຄິດໃຫ້ຖະຫວາຍກຽດແກ່ພະເຈົ້າຢ່າງໃດ? |

*(ໃຫ້ຕອບບົດເສັງທີ 7)*

## ຄຳຕອບ:

**1** *ກ. ຈິດໃຈ ຂ. ຄວາມຄິດ*

**2** *ຄິດ*

**3** *ກ. ພະຍາມານ ຂ. ແສງສະຫວ່າງຂອງຂ່າວປະເສີດ. (ເລື່ອງພະສະງ່າລາສີຂອງພະຄຣິດ)*
*ຄ. ພະຍາມານປົກບັງຕາເຂົາໄວ້. (ຄຳຄ້າຍຄືກັນກໍໄດ້)*

**4** *ຂ ງ ຈ*

**5** *ກ*

**6** *ເມື່ອໃດທີ່ຈະເຂົາໄປເຝົ້າອົງພະຜູ້ເປັນເຈົ້າ*

**ຄຳຕອບ (ຕໍ່):**

**7** *ກ. ພະຍານມານ ຂ. ພະເຢຊູ ຄ. ພະເຢຊູ ງ. ພະຍານມານ*
*ຈ. ພະຍານມານ ສ. ພະຍານມານ*

**8** *ກ. ຟາລິຊາຍ ຂ. ຊາດູກາຍ ຄ. ພະຍານມານ*

**9** *ກ. ເຂົາຕື່ມໃສ່ພະທຳ ຂ. ເຂົາຫັກສ່ວນອອກຈາກພະທຳ*
*ຄ. ພະຍານມານຫຼອກລວງເຂົາໃຫ້ຕື່ມໃສ່ ຫຼື ຫັກອອກຈາກພະທຳ*

**10** *ກ. ພະວິຫານ ຂ. ວັນອັງຄານ ຄ. ຄວາມຄິດ*

**11** *ກ. ຄຳອຸປະມາເລື່ອງລູກຊາຍສອງຄົນ ຄຳອຸປະມາເລື່ອງສວນອະງຸ່ນແລະຄົນເຊົ່າ ຄຳອຸປະມາເລື່ອງພິທີອະພິເສກ*
*ຂ. 4. ບຸດດາວິດ 3. ພະບັນຍັດຂໍ້ໃຫຍ່ 2. ການຄືນມາຈາກຕາຍ 1. ການເສຍຊ່ວຍ*

**12** *ກ. ບັນຫາເລື່ອງການເສຍຊ່ວຍ ຂ. ບັນຫາເລື່ອງການຄືນມາຈາກຕາຍ*
*ຄ. ພະບັນຍັດຂໍ້ໃຫຍ່ ງ. ບັນຫາເລື່ອງບຸດດາວິດ*

**13** *ກ. ຟາລິຊາຍ ຂ. ພວກເຮໂລດ ຄ. "ການທີ່ເສຍຊ່ວຍໃຫ້ກາຍຊາສົມຄວນຫຼືບໍ່?"*
*ງ. ເຈດຕະນາຮ້າຍ*

**14** *ກ. ສິ່ງທີ່ເປັນຂອງກາຍຊາຈົ່ງຄືນຖະຫວາຍແກ່ກາຍຊາແລະສິ່ງທີ່ເປັນຂອງພະເຈົາຈົ່ງຄືນຖະຫວາຍແກ່ພະເຈົາ ຂ. ເຂົາປະຫຼາດໃຈຈຶ່ງພາກັນໜີຈາກພະອົງໄປ*

**15** *ກ. ສິ່ງທີ່ເປັນຂອງກາຍຊາຈົ່ງຄືນຖະຫວາຍແກ່ກາຍຊາແລະສິ່ງທີ່ເປັນຂອງພະເຈົາຈົ່ງຄືນຖະຫວາຍແກ່ພະເຈົາ. ຂ. ບໍ່ ຄ. ບໍ່*

**16** *ຄ ຖືກ*

**17** *ກ. ການເສຍຊ່ວຍ ຂ. ຟາລິຊາຍ ແລະພວກເຮໂລດ ຄ. ຮ້າຍ*

**18** *ກ. ຊາດູກາຍ ຂ. ເລື່ອງການຄືນມາຈາກຕາຍ*

**19** *ກ. ເຊື່ອວ່າບໍ່ມີການຄືນຈາກຕາຍ ຂ. ການຄືນມາຈາກຕາຍ ຄ. ບໍ່ເຊື່ອ*
*ງ. ຢາກຈັບຜິດ*

**20** *ພະຄຳພີ... ລິດເດດ*

**21** *ກ. ພະຍານມານ ຂ. ພະເຢຊູ (ພະວິນຍານກໍໄດ້)*

**22** *ກ. ຕາຍ... ເປັນ ຂ. ປະຫຼາດໃຈ*

**23** *ກ. ມທ 22:34-40 ຂ. ຊາດູກາຍ ຄ. ນັກທຳ ງ. ຟາລິຊາຍ*
*ຈ. ຈົ່ງຮັກອົງພະຜູ້ເປັນເຈົາ*

**24** *ເພື່ອຈະຈັບຜິດພະອົງ ຫຼື ທົດລອງພະອົງກໍໄດ້*

**25** *ກ. "ພວກທ່ານຄິດເຫັນຢ່າງໃດດ້ວຍເລື່ອງພະຄຼິດ ເພິ່ນເປັນເຊື້ອສາຍຂອງຜູ້ໃດ?"*
*ຂ. "ເປັນເຊື້ອສາຍຂອງດາວິດ"*

**26** *ຂ ຖືກ*

**ຄຳຕອບ (ຕໍ່):**

**27** *ຖ້າຢ່າງນັ້ນ ເຫດສັນໃດດາວິດໂດຍເດດພະວິນຍານຈຶ່ງເອີ້ນພະອົງວ່າ "ອົງພະຜູ້ເປັນເຈົ້າ" (ໃນ ພສສ 110:1)*

**28** *ບຸດ... ພະຜູ້ເປັນເຈົ້າ*

**29** *ກ. ເພື່ອຈັບຜິດພະອົງ ຂ. ຊອກຫາຄວາມຈິງ*

**30** *ຕອບພະອົງບໍ່ໄດ້ຈັກຄຳ*

**31** *ກ. ຈັບຜິດພະອົງ ຂ. 1. ຂ ຖືກ 2. ຄ ຖືກ 3. ງ ຖືກ 4. ກ ຖືກ*

**32** *ຄວາມຄິດ*

**33** *ກ. ພວກຟາລີຊາຍເພີ້ມຕື່ມພະຄຳຂອງພະເຈົ້າ ຂ. ຊາດູກາຍຕັດອອກ ຄ. 1 ແລະ 3 ຖືກ*

**34** *ກ. ເສຍໜິດ ຂ. (ໃຫ້ທ່ານຕອບຄວາມທີ່ບອກວ່າໃຈຂອງເຂົາມືດມົວ)*

**35** *ກ. ຊາວໂລກ ຂ. ຈິດໃຈ*

**36** *ຕັ້ງຂຶ້ນໃໝ່*

**37** *ກ. ສຸດ ຂ. ສົມບູນ ຄ. ພະເຈົ້າ ງ. ວິນຍານຈິດ.*

**38** *ຕັ້ງຂຶ້ນໃໝ່. (ຄຳຄ້າຍຄືກັນກໍໄດ້)*

**39** *ພະຄຼິດ.*

**40** *ຂ ແລະ ຄ "ຕັ້ງ" ກ ງ ແລະ ຈ "ບໍ່"*

**41** *ກ. 3 ເທື່ອ ຂ. 8 ເທື່ອ ຄ. ສິ່ງທີ່ຢູ່ເບື້ອງເທິງ*

**42** *ບັນຍັດຂອງພະອົງ*

**43** *(ໃຫ້ແລກປ່ຽນຄວາມຄິດເຫັນກັນໃນປະຊຸມ) ທັງ ກ ແລະ ຂ*

**44** *ບໍ່ຮູ້ຈັກພະຄຳພີ ຫຼືລິດເດດຂອງພະເຈົ້າ*

**45** *(ຊື່ຂອງທ່ານເອງ)*

**46** *ກ. ໃນຖ້ອຍຄຳຂອງພະອົງ ຂ. ຮູ້ຈັກຄວາມຈິງ ຄ. ພະເຢຊູ*